ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

ຫ້ອງການ

ເລກທີ 1569 /ຫກ.

ນະຄອນຫຼວງວຽງຈັນ, ວັນທີ 16 ຕຸລາ 2023

# ແຈ້ງການປະມູນ

- ອີງຕາມ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ **02** ພະຈິກ **2017**;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບ ໂຄງການບຸກເບີກພື້ນທີ່ ສະຖາບັນການເມືອງ ແລະ ການປົກຄອງພາກໃຕ້ ຢູ່ແຂວງ ຈໍາປາສັກ; ສະບັບເລກທີ 1450/ສມປຊ, ລົງວັນທີ 06 ຕຸລາ 2023.

ຫ້ອງການ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດ, ບຸກຄົນ, ນິຕິບຸກຄົນຮັບຊາບ ເພື່ອເຂົ້າຮ່ວມໃນການປະມູນ ໂຄງການບຸກເບີກພື້ນທີ່ ສະຖາບັນການເມືອງ ແລະ ການປົກຄອງພາກໃຕ້ ຢູ່ ແຂວງຈໍາປາສັກ ປະຈໍາປີ 2023; ເຊີ່ງປະກອບມີບັນດາມາດຖານເງື່ອນໄຂ ດັ່ງນີ້:

1. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນວຸດທິເໝາະສົມ, ມີໃບອະນຸຍາດດໍາເນີນທຸລະກິດທີ່ຖືກຕ້ອງ ຕາມກົດໝາຍ ທີ່ກ່ຽວພັນກັບ ກໍ່ສ້າງທົ່ວໄປ.
2. ບໍລິສັດທີ່ມີຄຸນວຸດທິເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ພະແນກແຜນການ-ການເງິນ ຜູ້ຮັບຜິດຊອບຊື່: ນ. ລຸນນີ ໄໝທະວີເພັດ ເບີ ໂທ 020 55053102 ແລະ ນ. ນ້ອຍ ມູນນີວົງ ເບີ 020 9358 8838 ໃນໂມງລັດຖະການ.
3. ບໍລິສັດໃດທີ່ຕ້ອງການຊື້ຊອງປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນໜັງສືສະເໜີຫາ ທີ່ຢູ່ຂ້າງລຸ່ມນີ້, ເລີ່ມຂາຍຊອງນັບແຕ່ 16 ຕຸລາ 2023 ເປັນຕົ້ນໄປ, ໃນລາຄາ 1.000.000 (ໜຶ່ງລ້ານກີບ) ກີບ, ຈໍານວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊໍາລະຕ້ອງຈ່າຍເປັນເງິນສົດເທົ່ານັ້ນ.
4. ຊອງປະມູນຕ້ອງສົ່ງກ່ອນເວລາ 13:00 ໂມງ ຂອງວັນທີ 06 ພະຈິກ 2023 ທີ່ ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແລະ ຊອງປະມູນລາຄາທຸກໆ ຊອງຈະໄດ້ເປີດໃນເວລາ 14:30ໂມງ ຂອງວັນທີ 06 ພະຈິກ 2023 ໂດຍຊ່ອງໜ້າຄະນະຮັບຜິດຊອບໂຄງການ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈ.
5. ທຸກໆຊອງປະມູນ ຕ້ອງໄດ້ມີໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫລື ຫນັງສືຄໍ້າປະກັນການປະມູນຈາກທະນາຄານ ຢ່າງໜ້ອຍບໍ່ໃຫ້ຫລຸດ 02% ຂອງລາຄາທີ່ສະເໜີເຂົ້າປະມູນ.
6. ສະຖານທີ່ຫ້ອງປະຊຸມຊັ້ນ II ຕຶກຫ້ອງການ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເບີໂທຕິດຕໍ່ 021 752001, 020 55053102 ຫລື 020 9358 8838

ດັ່ງນັ້ນ,ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຈຶ່ງຂໍແຈ້ງມາຍັງບັນດາບໍລິສັດຕ່າງໆເຂົ້າຮ່ວມການປະມູນຕາມວັນເວລາດ້ວຍ .

ຮັກສາການຫົວໜ້າຫ້ອງການ

ຫ້ອງການ

ຄົມວິກິດ ສີມມະລີວົງ